**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ກະຊວງອຸດສາຫະກຳ ແລະ ການຄ້າ**

**ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ** ເລກທີ ໐໐໔໒ /ກທຄວ.ອຄ

ນະຄອນຫລວງວຽງຈັນ,ວັນທີ ໐໑ ມັງກອນ ໒໐໑໙

ເຖິງ: - ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

- ເຈົ້າໜ້າທີ່ທະບຽນວິສາຫະກິດ, (ພະແນກ, ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນທ້ອງຖິ່ນ)

ເລື່ອງ: ຮ່າງ ແບບພິມໃໝ່ ກ່ຽວກັບຄຳຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດຂອງຜູ້ລົງທຶນ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ຄຳສັ່ງ, ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018, ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປລາວ;
- ອີງຕາມ ຂໍ້ຕົກລົງ, ສະບັບເລກທີ 0023/ອຄ.ກທຄວ, ລົງວັນທີ 9 ມັງກອນ 2019, ວ່າດ້ວຍການຂຶ້ນທະບຽນວິສາຫະກິດ.

ເພື່ອເຮັດໃຫ້ສອດຄ່ອງກັບລະບົບການຂຶ້ນທະບຽນສ້າງຕັ້ງວິສາຫະກິດ ຮູບແບບໃໝ່ ຕາມຄຳສັ່ງ 02 ຂອງນາຍົກ, ແນໃສ່ຮັບປະກັນຄວາມສະດວກ ງ່າຍດາຍ ແກ່ການນຳໃຊ້ ແລະ ການປະກອບຂໍ້ມູນຂອງຜູ້ລົງທຶນ ຫຼືປະຊາຊົນບັນດາເຜົ່າ ໃນການສ້າງຕັ້ງທຸລະກິດຂອງຕົນ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ແຈ້ງມາຍັງພະແນກ ແລະ ຫ້ອງການອຸດສາຫະກຳ ແລະການຄ້າ ຂັ້ນທ້ອງຖິ່ນ ຊາບ ແລະ ຈັດຕັ້ງປະຕິບັດ ຮ່າງ ແບບພິມໃໝ່ກ່ຽວກັບຄຳຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ ຂອງຜູ້ລົງທຶນ ດັ່ງນີ້:

ກ. ຮ່າງ ແບບພິມໃໝ່ ກ່ຽວກັບຄຳຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ ຕາມແຕ່ລະປະເພດ, ຮູບການ ແລະ ຮູບແບບວິສາຫະກິດ:

1) ຊຸດສຳນວນຄຳຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ ຂອງວິສາຫະກິດສ່ວນບຸກຄົນ :

- ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຂອງວິສາຫະກິດສ່ວນບຸກຄົນ;
- ໃບແຈ້ງລາຍການກິດຈະການທີ່ສະເໜີປະກອບທຸລະກິດ.

ນອກຈາກນີ້ ຍັງມີແບບພິມ 1) ໃບມອບສັນທະກ່ຽວກັບການພົວພັນເອກະສານທະບຽນວິສາຫະກິດ ແລະ 2) ປະຫວັດຫຍໍ້ຜູ້ລົງທຶນຫຼືຄົນຕ່າງປະເທດ (ຕາມແບບພິມຂອງກະຊວງ ປກສ).



Scanned with CamScanner

2) ຊຸດສຳນວນຄຳຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ ຂອງວິສາຫະກິດຮຸ້ນສ່ວນສາມັນ :

- ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຂອງວິສາຫະກິດຮຸ້ນສ່ວນສາມັນ ;
- ໃບແຈ້ງລາຍການກິດຈະການທີ່ສະເໜີປະກອບທຸລະກິດ;
- ສັນຍາສ້າງຕັ້ງວິສາຫະກິດຮຸ້ນສ່ວນສາມັນ.

ນອກຈາກນີ້ ຍັງມີ ແບບພິມເອກະສານຄັດຕິດ ປະກອບດ້ວຍ : 1) ໃບມອບສັນທະກ່ຽວກັບການພົວພັນເອກະສານທະບຽນວິສາຫະກິດ ແລະ 2) ປະຫວັດຫຍໍ້ຜູ້ລົງທຶນ ຫຼື ຄົນຕ່າງປະເທດ (ຕາມແບບພິມຂອງກະຊວງ ປກສ).

3) ຊຸດສຳນວນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຂອງວິສາຫະກິດຮຸ້ນສ່ວນຈຳກັດ :

- ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຂອງວິສາຫະກິດຮຸ້ນສ່ວນຈຳກັດ ;
- ໃບແຈ້ງລາຍການກິດຈະການທີ່ສະເໜີປະກອບທຸລະກິດ;
- ສັນຍາສ້າງຕັ້ງວິສາຫະກິດຮຸ້ນສ່ວນຈຳກັດ;

ນອກຈາກນີ້ ຍັງມີແບບພິມເອກະສານຄັດຕິດ ປະກອບດ້ວຍ: 1) ໃບມອບສັນທະກ່ຽວກັບການພົວພັນເອກະສານທະບຽນວິສາຫະກິດ ແລະ 2) ປະຫວັດຫຍໍ້ຜູ້ລົງທຶນ ຫຼື ຄົນຕ່າງປະເທດ (ຕາມແບບພິມຂອງກະຊວງ ປກສ).

4) ຊຸດສຳນວນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຂອງບໍລິສັດຈຳກັດ :

- ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຂອງບໍລິສັດຈຳກັດ ;
- ໃບແຈ້ງລາຍການກິດຈະການທີ່ສະເໜີປະກອບທຸລະກິດ;
- ສັນຍາສ້າງຕັ້ງບໍລິສັດຈຳກັດ;

ນອກຈາກນີ້ ຍັງມີ ແບບພິມເອກະສານຄັດຕິດ ປະກອບດ້ວຍ: 1) ບົດບັນທຶກກອງປະຊຸມສ້າງຕັ້ງບໍລິສັດຈຳກັດ, 2) ໃບມອບສັນທະກ່ຽວກັບການພົວພັນເອກະສານທະບຽນວິສາຫະກິດ ແລະ 3) ປະຫວັດຫຍໍ້ຜູ້ລົງທຶນ ຫຼື ຄົນຕ່າງປະເທດ (ຕາມແບບພິມຂອງກະຊວງ ປກສ).

5) ຊຸດສຳນວນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຂອງບໍລິສັດຈຳກັດຜູ້ດຽວ

- ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຂອງບໍລິສັດຈຳກັດຜູ້ດຽວ;
- ໃບແຈ້ງລາຍການກິດຈະການທີ່ສະເໜີປະກອບທຸລະກິດ;

ນອກຈາກນີ້ ຍັງມີ ແບບພິມເອກະສານຄັດຕິດ ປະກອບດ້ວຍ: 1) ໃບມອບສັນທະກ່ຽວກັບການພົວພັນເອກະສານທະບຽນວິສາຫະກິດ ແລະ 2) ປະຫວັດຫຍໍ້ຜູ້ລົງທຶນ ຫຼື ຄົນຕ່າງປະເທດ (ຕາມແບບພິມຂອງກະຊວງ ປກສ).

6) ຊຸດສຳນວນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຂອງບໍລິສັດມະຫາຊົນ

- ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຂອງບໍລິສັດມະຫາຊົນ;
- ໃບແຈ້ງລາຍການກິດຈະການທີ່ສະເໜີປະກອບທຸລະກິດ;
- ສັນຍາສ້າງຕັ້ງບໍລິສັດມະຫາຊົນ.



Scanned with CamScanner

ນອກຈາກນີ້ ຍັງມີ ແບບພິມເອກະສານຄັດຕິດ ປະກອບດ້ວຍ: 1) ບົດບັນທຶກກອງປະຊຸມສ້າງຕັ້ງບໍລິສັດມະຫາຊົນ, 2) ໃບມອບສັນທະກ່ຽວກັບການພົວພັນເອກະສານທະບຽນວິສາຫະກິດ ແລະ 3) ປະຫວັດຫຍໍ້ຜູ້ລົງທຶນ ຫຼື ຄົນຕ່າງປະເທດ (ຕາມແບບພິມຂອງກະຊວງ ປກສ).

7) **ຊຸດສຳນວນຄຳຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງສາຂາວິສາຫະກິດ (ນິຕິບຸກຄົນຕ່າງປະເທດ)**

- ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດສ້າງຕັ້ງສາຂາຂອງວິສາຫະກິດ (ນິຕິບຸກຄົນຕ່າງປະເທດ).

ນອກຈາກນີ້ ຍັງມີ ແບບພິມເອກະສານຄັດຕິດ ປະກອບດ້ວຍ : 1) ໃບມອບສັນທະກ່ຽວກັບການພົວພັນເອກະສານທະບຽນວິສາຫະກິດ ແລະ 2) ປະຫວັດຫຍໍ້ຜູ້ລົງທຶນ ຫຼື ຄົນຕ່າງປະເທດ (ຕາມແບບພິມຂອງກະຊວງ ປກສ).

8) **ຊຸດສຳນວນຄຳຮ້ອງແຈ້ງຈົດທະບຽນວິສາຫະກິດ ຂອງສະຫະກອນ :**

- ໃບຄຳຮ້ອງແຈ້ງຈົດທະບຽນສະຫະກອນ;
- ບົດບັນທຶກກອງປະຊຸມສ້າງຕັ້ງສະຫະກອນ;
- ບັນຊີລາຍຊື່ສະມະຊິກຜູ້ສ້າງຕັ້ງສະຫະກອນ;
- ບັນຊີລາຍຊື່ກຳມະການບໍລິຫານສະຫະກອນ.

9) **ຊຸດສຳນວນຄຳຮ້ອງແຈ້ງຂຶ້ນທະບຽນສ້າງຕັ້ງວິສາຫະກິດ ຂອງລັດວິສາຫະກິດ**

(ປະຕິບັດຕາມ ລະບຽບການທີ່ກ່ຽວຂ້ອງ).

**ຂ. ຮ່າງ ແບບພິມເອກະສານ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດ**

ພາຍຫລັງຜູ້ລົງທຶນ ປະກອບສຳນວນເອກະສານຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຖືກຕ້ອງແລ້ວ ເຈົ້າໜ້າທີ່ທະບຽນວິສາຫະກິດ ຕ້ອງອອກທະບຽນວິສາຫະກິດ ພ້ອມເອກະສານ ຕາມແບບພິມ ໃນຕາມແຕ່ລະກໍລະນີ ລຸ່ມນີ້ :

1) ໜັງສືຮັບຮອງການປ່ຽນແປງເນື້ອໃນທະບຽນວິສາຫະກິດ;
2) ໜັງສືແນະນຳໃຫ້ວິສາຫະກິດໃນກິດຈະການທີ່ຕ້ອງຂໍອະນຸຍາດ, ຍົກເວັ້ນສາຂາວິສາຫະກິດ ນິຕິບຸກຄົນຕ່າງປະເທດ, ລັດວິສາຫະກິດ ແລະ ສະຫະກອນ.

**ຄ. ບາງຄຳແນະນຳເພີ່ມເຕີມ**

- ເຈົ້າໜ້າທີ່ທະບຽນວິສາຫະກິດຂອງພະແນກ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນທ້ອງຖິ່ນ ຕ້ອງເກັບມ້ຽນທຸກເອກະສານດັ່ງກ່າວມາຂ້າງເທິງ (ທັງໃນຮູບແບບ Hard & Soft Copy ).
- ລາຍລະອຽດ ກ່ຽວກັບ ຮ່າງ ແບບພິມໃໝ່ ດັ່ງກ່າວ ຄັດຕິດມາພ້ອມນີ້.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ນັບແຕ່ວັນທີ 1 ກຸມພາ 2019 ເປັນຕົ້ນໄປ.

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ດຣ.ສິມພວງ ພຸ່ງນພິບົດ



Scanned with CamScanner